# ອາຊະຍາກຳຈາກຄວາມກຽດຊັງ

## *ສິ່ງທີ່ທ່ານຕ້ອງຮູ້ເພື່ອປົກປ້ອງ-ຕົວທ່ານເອງ ແລະ ຄົນອື່ນ*

**ພະແນກຍຸດຕິທຳຂອງ ລັດ ຄາລິຟເນຍມີ** ຄື່ອງມ ແລະ ຊັບພະຍາກອນທີ່ມີໃຫ້ເພື່ອຊ່ວຍເຫລືອ ແລະ ຊ່ວຍເຈົ້າ ໜ້າທີ່ບັງຄັບໃຊກົດໝາຍໃນທ້ອງຖິ່ນ, ລັດ, ແລະ ສູນກາງ ໃນການສືບສວນກ່ຽວກັບອາຊະຍາກຳທີ່ອາດຈະເກີດຂຶ້ນ, ລວມທັງການການົດ, ການຈັບຄຸມຕົວ, ການດຳເນີນຄະດີ ແລະ ການຕັດສິນລົງໂທດຜູ້ກໍ່ອາສະຍາກຳເຫຼົ່ານັ້ນ.

**ທະນາຍຄວາມໃຫຍ່ຂອງລັດຄາລິຟເນຍ Rob Bonta** ໄດສະ ເໜີຂໍ້ມູນຕໍ່ໄປນີ້ກ່ຽວກັບວິທີການການົດ ແລະ ລາຍງານການກໍ່ອາສະຍາກຳຈາກຄວາມກຽດຊັງ ແລະ ການບໍລິການທີ່ມີໃຫ້ຜເຄາະຮ້າຍຈາກອາຊະຍາກຳຈາກກຽດຊັງ.

## *ວິທີການລະບຸອາຊະຍາກຳຈາກຄວາມກຽດຊັງ*

**ສັນຍານທີ່ບົ່ງບອກເຖງອາສະຍາກຳທີ່ໄດ້ຮັບການຈູງໃຈຈາກຄວາມກຽດຊັງອາດມີ:**

- ຜກະທຳຜິດໄດ້ເລືອກເອົາຜເຄາະຮ້າຍ ຫລື ຊັບສິນເນື່ອງຈາກ ພວກເຂົາເປັນກຸມຄົນທີ່ໄດຮັບການປົກປ້ອງ, ເຊັ່ນ: ສາສະໜາ ຫ ເພດໃດເພດໜຶ່ງ.
- ຜກະທຳຜິດໄດ້ສະແດງຄຳຄິດເຫັນເປັນລາຍລັກອັກສອນ ຫລື ດ້ວຍຄຳເວົ້າທີ່ສະແດງເຖິງຄວາມລຳອຽງ.
- ອາຊະຍາກຳດັ່ງກ່າວເກີດຂຶ້ນໃນວັນທີທີ່ສຳຄັນ ສຳລັບ ກຸມຄົນທີ່ໄດຮັບການປົກປ້ອງຂອງຜູ້ຖືກເຄາະຮ້າຍ ຫ ຜກະທຳຜິດ.
- ມີການຈັດກິດຈະກຳຄວາມກຽດຊັງໃນພື້ນທີ່.

**ຖ້າທ່ານເປັນຜູ້ຖືກເຄາະຮ້າຍຈາກອາຊະຍາກຳ, ທ່ານຄວນ:**

- ຕິດຕໍ່ໜ່ວຍງານບັງຄັບໃຊ້ກົດໝາຍທ້ອງຖິ່ນຂອງທ່ານໂດຍທັນທີ.
- ໄປພົບແພດໃຫ້ການປິ່ນປົວ (ຖ້າທ່ານຕ້ອງການ).
- ບັນທຶກເອົາຄຳເວົ້າທີ່ໄດ້ກ່າວ.
- ເກັບບັນທຶກຂໍ້ເທັກຈິງອື່ນໆ.
- ເກັບບັນທຶກຫຼັກຖານທັງໝົດ (ຕວຢ່າງ: ຮູບແຕມ, ຫອຍໄຂ່, ສິ່ງທີ່ຂຽນໃສ່ຍານພາຫະນະຂອງຜເຄາະຮ້າຍ). ຖ້າປອດໄພ, ລໍຖ້າຈົນກວ່າໜ່ວຍງານບັງຄັບໃຊ້ກົດໝາຍມາຮອດ ແລະ ເກັບຖ່າຍຮູບ.
- ເກັບກຳເອົາຊື່, ທີ່ຢູ່, ເບີໂທລະສັບ, ແລະ ອີເມວ ແລະ ພະຍານອື່ນໆຂອງຜເຄາະຮ້າຍໄວ້.
- ພະຍາຍາມເກັບກຳເອົາຄຳອະທິບາຍຈາກຜເຫັນເຫດການຂອງຄົນຮ້າຍ ຫລື ພາຫະນະ.
- ຕິດຕໍ່ຫາອົງການຈັດຕັ້ງຊຸມຊົນໃນເຂດຂອງທ່ານທີ່ຮັບມືກັບອາຊະຍາກຳຈາກຄວາມກຽດຊັງ.

**ສິ່ງທີ່ທ່ານ ແລະ ຊຸມຊົນຂອງທ່ານສາມາດເຮັດໄດ້**

- ອອກສຽງຕໍ່ຕ້ານຄວາມກຽດຊັງ ແລະ ຄວາມບໍ່ຍອມຮັບ.
- ຈັດໃຫ້ມີການຊຸມນຸມຊຸມຊົນເພື່ອສະໜັບສະໜູນຜູ້ຖືກເຄາະຮ້າຍ.
- ໃຫ້ການສະໜັບສະໜູນ ແລະ ຊ່ວຍຜູ້ຖືກເຄາະຮ້າຍ.
- ຂໍໃຫ້ເຈົ້າໜ້າທີ່ຮັກສາ ສາທາລະນະອອກສຽງຕໍ່ຕ້ານອາຊະຍາກຳຈາກຄວາມກຽດຊັງ.
- ແຕ່ງຕັ້ງຄະນະກຳມະການດ້ານມະນຸດສາພັນ ຫລື ເຄືອຂ່າຍກຳກັດອາຊະຍາກຳທີ່ລວມມີໜ່ວຍງານບັງຄັບໃຊກົດໝາຍ, ລັດຖະບານທ້ອງຖິ່ນ, ໂຮງຮຽນ, ອົງການສາສະໜາ ແລະອົງການຈັດຕັ້ງຊຸມຊົນ. ສະ ເໜີໃຫ້ພວກເຂົາຕອບສະໜອງແກ້ໄຂອາຊະຍາກຳຈາກຄວາມກຽດຊັງໃນທັນທີເມື່ອເກີດຂຶ້ນ ແລະ ສົ່ງເສີມການປ້ອງກັນ ແລະ ປູກຈິດສຳນຶກ.

## *ອາຊະຍາກຳຈາກຄວາມກຽດຊັງ ຫຼື ເຫດການຄວາມກຽດຊັງ?*

ເປັນສິ່ງສຳຄັນທີ່ຈະຮູ້ຄວາມແຕກຕ່າງລະຫວ່າງ ອາຊະຍາກຳຈາກຄວາມກຽດຊັງ ແລະ ເຫດການຄວາມກຽດຊັງ.

ອາຊະຍາກຳຈາກຄວາມກຽດຊັງແມ່ນອາຊະຍາກຳຕໍ່ບຸກຄົນ, ກຸມຄົນ, ຫ ຊັບສິນທີ່ຖືກກະຕຸ້ນຈາກຜທີ່ຖືກເຄາະຮ້າຍທີ່ເປັນເຫຍື່ອ ຫ ກຸມຄົນໃນສັງຄົມທີ່ໄດຮັບການປົກປ້ອງທີ່ເຫັນຮູ້. ອາຊະຍາກຳຈາກຄວາມກຽດຊັງສາມາດຖືກດຳເນີນຄະດີໄດ້ ບໍ່ວ່າຈະເປັນການກະທຳຜິດທາງອາຍາໃນຖານລະຫຸໂທດ ຫ ການກະທຳຜິດໂດຍອີງຕາມການກະທຳທີ່ໄດ້ກະທຳ.

ໃນລັດຄາລິຟເນຍ, ທ່ານສາມາດຕກເປັນເຫຍື່ອຂອງອາຊະຍາກຳຈາກຄວາມກຽດຊັງຖ້າທ່ານຖືກເປັນເປົ້າໝາຍຍ້ອນເຫດຜົນເກີດຂຶ້ນຈິງ ຫ ຖືກຮັບຮູ້ຂອງທ່ານ:

- ເຊື້ອຊາດ ຫ ຊົນເຜົ່າ
- ສັນຊາດ
- ສາສະໜາ
- ເພດ
- ຄວາມນິຍົມທາງເພດ
- ພິການທາງດ້ານຮ່າງກາຍ ຫ ຈິດໃຈ, ຫ
- ການເຊື່ອມໂຍງກັບບຸກຄົນ ຫ ກຸມຄົນທີ່ມີລັກສະນະໜຶ່ງ ຫ ຫລາຍກວ່າລັກສະນະເຫຼົ່ານີ້ຕາມ “ຄວາມເປັນຈິງ” ຫ “ຮັບຮູ້”.

ກະລຸນາຮັບຮູ້ວ່າ, ຄຸນລັກສະນະທີ່ລະບຸໄວຂ້າງເທິງນີ້ແມ່ນຕວຢ່າງ, ແລະ ຖານອື່ນໆສຳລັບຄຸນລັກສະນະຂອງກຸມຄົນໃນສັງຄົມທີ່ໄດຮັບການປົກປ້ອງຕວຈິງ ຫ ຮັບຮູ້.

**ຖ້າທ່ານເຫັນເປັນອາຊະຍາກຳຈາກຄວາມກຽດຊັງ, ທ່ານຄວນລາຍງານອາຊະຍາກຳດັ່ງກ່າວໃຫ້ອົງການບັງຄບໃຊ້ກົດ ໝາຍທ້ອງຖິ່ນຂອງທ່ານ.**

ເຫດການຈາກຄວາມກຽດຊັງແມ່ນການກະທຳ ຫ ພຶດຕິກຳທີ່ຖືກກະຕຸ້ນໂດຍຄວາມກຽດຊັງ ແຕ່ ໄດຮັບປົກປ້ອງຢ່າງຖືກຕ້ອງຕາມກົດໝາຍໂດຍສິດທິໃນການປັບປຸງຄັ້ງທຳອິດໃຫ້ແກ່ສິດທິເສລີພາບໃນການສະແດງຄວາມຄິດເຫັນ. ຖ້າເຫດການຈາກຄວາມກຽດຊັງເລມຄຸກຄາມບຸກຄົນ ຫ ຊັບສິນ, ມັນອາດຈະກາຍເປັນອາຊະຍາກຳຈາກຄວາມກຽດຊັງ.

***ຕົວຢ່າງຂອງເຫດການຈາກຄວາມກຽດຊັງປະກອບມີ:***

- ການເອີ້ນຊື່
- ການໃສ່ຮ້າຍ
- ການສະແດງເນື້ອຫາຄວາມກຽດຊັງໃສ່ຊັບສິນຂອງທ່ານເອງ.
- ການລົງເນື້ອຫາຄວາມກຽດຊັງທີ່ບໍ່ໄດ້ສົ່ງຜົນເສຍຫາຍຕໍ່ຊັບສິນ.
- ການກະຈາຍເນື້ອຫາທີ່ເປັນຂໍຄວາມສະແດງເຖິງຄວາມກຽດຊັງໃນພື້ນທີ່ສາທາລະນະ.

## ທີ່ຫາການຊ່ວຍເຫຼືອ

ໂທຫາ ໙໑໑ ຫ ໄປໂຮງໝໍທ້ອງຖິ່ນ ຖ້າທ່ານຕ້ອງການ-ໃຫ້ມີການປິ່ນປົວດ່ວນ. ເພື່ອຍື່ນການລາຍງານ, ຕິດຕໍ່ຫາອົງການບັງຄັບໃຊ້ກົດໝາຍທ້ອງຖິ່ນຂອງທ່ານ.

---

### ໜ່ວຍງານໃຫ້ບໍລິການຜູ້ເຄາະຮ້າຍ ຂອງ ສຳນັກທະນາຍຄວາມ ແຫ່ງ ລັດຄາລິຟໍເນຍ

ໃຫ້ການສະໜັບສະໜູນ ແລະ ຂໍ້ມູນ ຕະຫຼອດຂະບວນການທາງອາຍາແກ່ຜເຄາະຮ້າຍຈາກອາຊະຍາກາ ແລະ ຄອບຄົວຂອງພວກເຂົາ. ສາລັບຂໍ້ມູນເພີ່ມເຕີມ, ໂທ (໘໗໗) ໔໓໓-໙໐໖໙ ຫ ເຂົ້າເບິ່ງທີ່ oag.ca.gov/hatecrimes.

---

### ພະແນກໃຫ້ຄວາມຍຸດຕິທໍາການຈ້າງງານ ແລະ ທີ່ພັກອາໄສ ຂອງລັດຄາລິຟໍເນຍ (DFEH)

ອົງການລັດທີ່ຮັບພິຊອບການບັງຄັບໃຊ້ກົດໝາຍດ້ານສິດທິພົນລະເມືອງຂອງລັດຄາລິຟເນຍ ແລະ ປົກປ້ອງປະຊາຊົນຈາກການເລືອກປະຕິບັດທີ່ຜິດກົດໝາຍໃນການຈ້າງງານ, ທີ່ຢູ່ອາໄສ ແລະ ທີ່ພັກສາທາລະນະ ແລະ ຈາກການກະທາຄວາມຮຸນແຮງຍ້ອນກຽດຊັງ ແລະ ການຄ້າມະນຸດ. DFEH ຈະຮັບການຮຽກຮ້ອງຈາກຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງຍ້ອນຄວາມກຽດຊັງ ຫ ການຂົ່ມຂູ່ໃຊ້ຄວາມຮຸນແຮງຕໍ່ຜູ້ຖືກເຄາະຮ້າຍ ຍ້ອນວ່າກຸ່ມຄົນໃດໜຶ່ງໃນສັງຄົມໄດຮັບການປົກປ້ອງຈິງ ຫ ຮັບຮູ້. ສາລັບຂໍ້ມູນກ່ຽວກັບວິທີການຍື່ນຄາຮ້ອງຂໍ, ໃຫ້ເຂົ້າເບິ່ງທີ່ dfeh.ca.gov.

---

### ສູນໃຫ້ບໍລິການຊ່ວຍເຫຼືອຊອກພະຍານຜູ້ຖືກເຄາະຮ້າຍຂອງສໍານັກງານທະນາຍຄວາມປະຈໍາຂົງເຂດທ້ອງຖິ່ນ

ເຮັດວຽກໂດຍກົງກັບຄະນະກໍາມະການໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ລັດ ຄາລິຟໍເນຍ (CalVCB) ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃນທຸກໆເມືອງ. ສໍາລັບຂໍ້ມູນກ່ຽວກັບສໍານັກງານທ້ອງຖິ່ນ ແລະ ອົງການຊ່ວຍເຫຼືອອື່ນ ໃຫ້ເຂົ້າເບິ່ງທີ່ victims.ca.gov/victims/localhelp.aspx.

---

### ກົມໃຫ້ຄວາມຍຸຕິທໍາ, ການໃຫ້ບໍລິການດ້ານການພົວພັນກັບ-ຊຸມຊົນສະຫະລັດອາເມລິກາ

ເຮັດວຽກຮ່ວມກັບກຸ່ມຊຸມຊົນເພື່ອແກ້ໄຂຂໍ້ຂັດແຍ່ງໃນຊຸມຊົນ ແລະ ປ້ອງກັນ ແລະ ຕອບໂຕກັບອາຊະຍາກາຈາກຄວາມກຽດຊັງທີ່ຖືກກ່າວຫາ. ສາລັບຂໍ້ມູນເພມເຕມ, ໃຫ້ເຂົ້າເບິ່ງທີ່ justice.gov/crs.

**OAG.CA.GOV/HATECRIMES**

## ຂໍ້ມູນ ສໍາລັບ ຜູ້ຖືກເຄາະຮ້າຍ

ກົດໝາຍວ່າດ້ວຍສິດທິຂອງຜູ້ຖືກເຄາະຮ້າຍຂອງ ລັດ ຄາລິຟເນຍ, ທີ່ເອີ້ນວ່າກົດໝາຍ Marsy, ທີ່ໃຫ້ສິດທີ່ສໍາຄັນເຫຼົ່ານີ້ແກ່ທ່ານ:

- **ໄດ້ຮັບເງິນທົດແທນການສູນເສຍຂອງທ່ານ.** ໃຊ້ເງິນເພື່ອຊ່ວຍການສູນເສຍຊັບສິນ, ຄ່າໃຊ້ຈ່າຍໃນການປິ່ນປົວ, ຄ່າຈ້າງທີ່ສູນຫາຍ ແລະ ການສູນເສຍອື່ນໆ.
- **ບອກອາຊະຍາກໍາມີຜົນກະທົບແນວໃດຕໍ່ທ່ານ.** ບອກໃຫ້ສານສານຮູ້ວ່າອາຊະຍາກໍາມີຜົນກະທົບຕໍ່ຊີວິດຂອງທ່ານແນວໃດ ກ່ອນຈໍາເລີຍຈະຖືກຕັດສິນລົງໂທດ.
- **ເກັບກໍາເອົາຂໍ້ມູນກ່ຽວກັບການດາເນີນຄະດີອາຍາ.** ສອບຖາມໄອຍະການສາລັບຂໍ້ມູນບາງຢາງກ່ຽວກັບຄະດີນີ້.
- **ຮັບຄາສັ່ງຈາກສານ.** ສານອາດຈະອອກຄາສັ່ງປ້ອງກັນເພື່ອໃຫ້ຈາເລີຍຢູຫ່າງຈາກທ່ານ ຫ ຄາສັ່ງຈ່າຍຄ່າທະນາຍຄວາມຖ້າທ່ານຈ້າງທະນາຍຄວາມເພື່ອຊ່ວຍໃນຄະດີຂອງທ່ານ. ສານຍັງອາດຈະອອກຄາສັ່ງໃຫ້ຈາເລີຍຈ່າຍເງິນ $໔໕,000 ຫ ຫຼາຍກວ່ານັ້ນ ສາລັບການລະເມີດສິດພົນລະເມອງຂອງທ່ານ. (ລົມກັບທະນາຍຄວາມກ່ຽວກັບສິດທິຂອງທ່ານພາຍໃຕ້ກົດ ໝາຍ Ralph ແລະ ກົດໝາຍ Bane.)
- ກົດໝາຍລັດຄາລິຟເນຍຫ້າມເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍສອບຖາມບຸກຄົນ, ລວມທັງຜທີ່ກາລັງລາຍງານ ຫ ຜຕກເປັນເຫຍື່ອຂອງອາຊະຍາກາທີ່ອາດເກີດຂຶ້ນ, ກ່ຽວກັບສະຖານະການເຂົ້າເມອງຂອງພວກເຂົາ, ເວັ້ນເສຍແຕ່ວ່າຂໍ້ມູນດັ່ງກ່າວມີຄວາມຈາເປັນຕ້ອງໃຊ້ຢັ້ງຢືນຜູ້ຖືກເຄາະຮ້າຍ ສາລັບ ປະເພດວີຊ່າ U (ຜູ້ຖືກເຄາະຮ້າຍຈາກວີຊາອາຊະຍາກາ) ຫ ປະເພດວີຊາ T (ຜູ້ຖືກເຄາະຮ້າຍຈາກວີຊາການຄ້າມະນຸດ).




*ການພິມເຜີຍແຜ່ຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກເງິນທຶນທີ່ມອບໃຫ້ໂດຍກອງທຶນ VOCA ຂອງລັດຖະບານກາງ ປີ ໒໐໑໘, ໝາຍເລກກອງທຶນຊ່ວຍເຫຼືອຍ່ອຍ VT໒໐໑໙໙໕໐໔ ຜ່ານ ສໍານັກງານໃຫ້ບໍລິການສຸກເສີນ ເຈົ້າຄອງ ລັດ ຄາລິຟໍເນຍ (CalOES).*

Rev 3-2021 <Lao>